# ຕາຕະລາງສັງລວມບັນຫາ ແລະ ຄວາມຄືບໜ້າ ຂໍ້ສະເໜີ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ກ່ຽວກັບຜົນກະທົບຂອງ COVID19

## ສາລະບານ


1. **ບົດສະເໜີ ເລກທີ 0259/ສຄອຊ, ວັນທີ 12 ມີນາ 2020 ( LBF-ກຸ່ມທ່ອງທ່ຽວ) ແລະ ຂໍ້ສະເໜີ ເພີ່ມເຕີມ ສິ່ງໃນກອງປະຊຸມຄະນະສະເພາະກິດລັດຖະບານ ວັນທີ 01 ເມສາ 2020 ..... 2**
   - ຕິດພັນກັບກະຊວງການເງິນ ..... 2
   - ຕິດພັນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ..... 6
   - ຕິດພັນກັບທະນາຄານ ແຫ່ງ ..... 9
   - ຕິດພັນກັບກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ສາທາລະນະສຸກ ແລະ ກະຊວງການເງິນ..... 10
   - ຕິດພັນກັບກະຊວງພະລັງງານ ແລະ ບໍ່ແຮ່ ..... 12
   - ຕິດພັນກັບ ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ ..... 13
   - ລັດວິສາຫະກິດ ນ້ຳປະປາ..... 13
   - ຕິດພັນກັບກະຊວງໄປສະນີ, ໂທລະຄົມ ແລະ ການສື່ສານ ..... 15
   - ຕິດພັນກັບສຳນັກງານນາຍົກລັດຖະມົນຕີ..... 15
2. **ບົດສະເໜີ ຂອງ ສຄອຊ ເລກທີ 0340/ສຄອຊ, ວັນທີ 17 ເມສາ 2020 ເລື່ອງ ສະເໜີການພິຈາລະນາແກ້ໄຂ ບັນຫາຮີບດ່ວນ ຕໍ່ຜົນກະທົບຂອງມາດຕະການສະກັດກັ້ນ, ປ້ອງກັນ ແລະ ຄວບຄຸມພະຍາດ COVID-19 . 17**
   - ຕິດພັນກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງສາທາລະນະສຸກ ..... 17
   - ຕິດພັນກັບກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ..... 23
   - ຕິດພັນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ..... 24
   - ຕິດພັນກັບທະນາຄານ ແຫ່ງ ສປປ ລາວ ..... 25
   - ຕິດພັນກັບກະຊວງການເງິນ ..... 26
   - ຕິດພັນກັບຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ..... 27
3. **ບົດສະເໜີ ຂອງ ສຄອຊ ເລກທີ 0355/ສຄອຊ, ວັນທີ 29 ເມສາ 2020 ເລື່ອງ ສະເໜີພິຈາລະນາປັບປຸງບາງ ມາດຕະການຂອງລັດຖະບານ ແລະ ຄະນະສະເພາະກິດ..... 28**

1. ບົດສະເໜີ ເລກທີ 0259/ສຄອຊ, ວັນທີ 12 ມີນາ 2020 ( LBF-ກຸ່ມທ່ອງທ່ຽວ) ແລະ ຂໍ້ສະເໜີ ເພີ່ມເຕີມສິ່ງໃນກອງປະຊຸມຄະນະສະເພາະກິດລັດຖະບານ ວັນທີ 01 ເມສາ 2020

| ຂະແໜງການ ກ່ຽວຂ້ອງ | ຂໍ້ສະເໜີ | ຄວາມຄືບໜ້າ | ເອກະສານອ້າງອີງ | ໝາຍເຫດ |
|---|---|---|---|---|
| ຕິດພັນກັບກະຊວງການເງິນ | 1. ສະເໜີໃຫ້ເລື່ອນເວລາຊໍາລະອາກອນຂອງປີ 2019 ໄປອີກ ສອງງວດ;<br>2. ພິຈາລະນາມີມາດຕະການຫຼຸດຜ່ອນການເກັບ ອາກອນມູນຄ່າເພີ່ມ ສໍາລັບ ຄ່າປີ້ຍົນ ແລະ ຜະລິດຕະພັນການທ່ອງທ່ຽວໃນຊ່ວງການແຜ່ລະບາດຂອງໄວຣັສ COVID-19, | • ກະຊວງການເງິນ ອອກແຈ້ງການເພີ່ມເຕີມ ເລກທີ 1128/ກສອ ລົງວັນທີ 24 ເມສາ 2020, ເພື່ອໃຫ້ຜູ້ປະກອບການ ປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ເງິນເດືອນຂອງຜູ້ອອກແຮງງານທັງໝົດ ທັງພາກລັດ ແລະ ພາກເອກະຊົນ ທີ່ມີລາຍໄດ້ 5 ລ້ານກີບລົງມາ ໃນໄລຍະ ເດືອນ ເມສາ ຫາ ມິຖຸນາ.<br>• ກະຊວງການເງິນ ອອກແຈ້ງການ ເລກທີ 1061/ກງ, ລົງວັນທີ 22 ເມສາ 2020 ມີເນື້ອໃນຄື:<br>  • ໃຫ້ປະຕິບັດນະໂຍບາຍຍົກເວັ້ນການປັບໄໝທີ່ເກີດຈາກການມອບອາກອນ ຫຼື ການແຈ້ງອາກອນ ຊັກຊ້າ (ແຕ່ສໍາລັບຜູ້ທີ່ໄດ້ຈ່າຍຄ່າປັບໄໝໄປແລ້ວກ່ອນໜ້ານີ້ ແມ່ນຈະບໍ່ໄດ້ຮັບເງິນຄືນ)<br>  • ໃຫ້ ບັນດາຫົວໜ່ວຍທຸລະກິດທີ່ຍັງບໍ່ທັນໄດ້ | • ແຈ້ງການເລກທີ 1128/ກສອ ລົງວັນທີ 24 ເມສາ 2020 ເລື່ອງ ການຈັດຕັ້ງປະຕິບັດພັນທະອາກອນຕາມຂໍ້ຕົກລົງວ່າດ້ວຍການກໍານົດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງ ໂຄວິດ 19,<br>• ແຈ້ງການ ເລກທີ 1061/ກງ, ລົງວັນທີ 22 ເມສາ 2020 ເລື່ອງການຈັດຕັ້ງປະຕິບັດພັນທະອາກອນຕາມຂໍ້ຕົກລົງວ່າດ້ວຍການກໍານົດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງ | • ການເລື່ອນເວລາຊໍາລະອາກອນ, ການເລື່ອນຊໍາລະຄ່າທາງ,ການຍົກເວັ້ນການເກັບອາກອນລາຍໄດ້ຈາກເງິນເດືອນ ຂອງຜູ້ອອກແຮງທີ່ມີລາຍຮັບຕໍ່າກວ່າ 5 ລ້ານກີບລົງມາ ແລະ ອາກອນລາຍໄດ້ຂອງຈຸນລະວິສາຫະກິດ ໄລຍະເດືອນ ເມສາ ຫາ ມິຖຸນາ ແມ່ນ ກໍາລັງຈັດຕັ້ງປະຕິບັດ<br>• ຍັງບໍ່ມີມາດຕະການເພີ່ມເຕີມກ່ຽວກັບການຍົກເວັ້ນອາກອນມູນຄ່າເພີ່ມ<br>• ກະຊວງການເງິນ ຍັງບໍ່ມີ ແຈ້ງການໃຫ້ຈັດຕັ້ງປະຕິບັດ ເລື່ອນການຊໍາລະພັນທະອາກອນ ຂອງຜູ້ |

| | | | | |
|---|---|---|---|---|
| | | ແຈ້ງມອບອາກອນ ເລີ່ມແຕ່ເດືອນເມສາ ຫາ ມິຖຸນາ 2020 ແມ່ນໃຫ້ແຈ້ງມອບອາກອນ ຂອງແຕ່ລະເດືອນຕາມກົດໝາຍກຳນົດ ແລະ ບໍ່ໃຫ້ກາຍເວລາ ຕາມທີ່ລະບຸໄວ້ໃນແຈ້ງການ.<br>• ສຳລັບຫົວໜ່ວຍທຸລະກິດທີ່ຍັງບໍ່ໄດ້ແຈ້ງມອບອາກອນແຕ່ເດືອນ ມັງກອນ 2020 ເປັນຕົ້ນມາ ແມ່ນໃຫ້ແຈ້ງມອບ ບໍ່ໃຫ້ກາຍ ເດືອນພຶດສະພາ, ຖ້າບໍ່ດັ່ງນັ້ນຈະບໍ່ໄດ້ຮັບ ການຍົກເວັ້ນຄ່າປັບໄໝ.<br><br>• ກະຊວງການເງິນ ອອກແຈ້ງການ ເລກທີ 0764/ຫກງ ລົງວັນທີ 21 ເມສາ 2020 ເພື່ອ ປ່ຽນແທນ ແຈ້ງການ ເລກທີ 0636/ຫກງ ລົງ ວັນທີ 26 ມີນາ 2020 ເລື່ອງການເລື່ອນເວລາ ສົ່ງເອກະສານການເງິນ ແລະ ລາຍງານຜົນ ການເຄື່ອນໄຫວປະຈຳປີ 2019: ຄື ໃຫ້ ເລື່ອນ ເວລາ ສົ່ງເອກະສານການເງິນ ແລະ ລາຍງານ ຜົນການເຄື່ອນໄຫວປະຈຳປີ 2019 ອອກໄປ ຈົນເຖິງ ວັນທີ 29 ພຶດສະພາ 2020<br>• ອີງຕາມ ແຈ້ງການ ເລກທີ 1027/ກງ, ກະຊວງ | ພະຍາດ ໂຄວິດ 19<br>• ກະຊວງການເງິນ ອອກແຈ້ງການ ເລກທີ 1027/ກງ, ລົງວັນທີ 10 ເມສາ 2020 ເລື່ອງ ການຈັດຕັ້ງປະຕິບັດພັນທະ ອາກອນ ຕາມຂໍ້ຕົກລົງວ່າດ້ວຍ ການກຳນົດນະໂຍບາຍ ແລະ ມາດຕະການ ເພື່ອ ຫຼຸດຜ່ອນຜົນ ກະທົບຂອງການລະບາດຂອງ ພະຍາດ COVID-19<br>• ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລົງວັນທີ 02 ເມສາ 2020<br>• ກະຊວງການເງິນ ອອກແຈ້ງການ ເລກທີ 0764/ຫກງ ລົງ ວັນທີ 21 ເມສາ 2020 ເພື່ອ ປ່ຽນແທນ ແຈ້ງການ ເລກທີ 0636/ຫກງ ລົງວັນທີ 26 ມີນາ 2020 ເລື່ອງການເລື່ອນ | ປະກອບການທີ່ປິ່ນອ້ອມທຸລະກິດ ການທ່ອງທ່ຽວ ເປັນໄລຍະເວລາ 3 ເດືອນ ຕາມລະບຸໃນຂໍ້ຕົກລົງ 31/ ນຍ |

| | | | | |
|---|---|---|---|---|
| | | ການເງິນແຈ້ງໃຫ້:<br>▪ ຍົກເວັ້ນອາກອນລາຍໄດ້ເງິນເດືອນຂອງຜູ້ອອກແຮງງານທີ່ມີລາຍໄດ້ 5 ລ້ານກີບລົງມາ ໃນໄລຍະເດືອນ ເມສາ ຫາ ມິຖຸນາ 2020. ສໍາລັບຜູ້ມີລາຍໄດ້ເງິນເດືອນເກີນ 5 ລ້ານກີບຂຶ້ນໄປ ແມ່ນໃຫ້ຫັກຍົກເວັ້ນ 5 ລ້ານກີບກ່ອນ ແລ້ວຈຶ່ງຄິດໄລ່ຕາມຂັ້ນທະວີຄູນ ຕາມກໍານົດໃນກົດໝາຍວ່າດ້ວຍອາກອນລາຍໄດ້.<br>▪ ຍົກເວັ້ນອາກອນລາຍໄດ້ຂອງຈຸນລະວິສາຫະກິດ ເປັນໄລຍະ 3 ເດືອນ (ເມສາ ຫາ ມິຖຸນາ 2020)<br>**ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລົງວັນທີ 02 ເມສາ 2020 ລະບຸໃຫ້ ກະຊວງການເງິນ**:<br>• ປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ຈາກເງິນເດືອນ ຂອງຜູ້ອອກແຮງງານທັງໝົດ ທັງພາກລັດ ແລະ ເອກະຊົນ ທີ່ມີລາຍຮັບຕໍ່າກວ່າ 5 ລ້ານກີບລົງມາ ໃນໄລຍະເວລາ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2020).<br>• ປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ຂອງຈຸນລະວິສາຫະກິດ ຕາມທີ່ກໍານົດໄວ້ | ເວລາ ສົ່ງເອກະສານການເງິນ ແລະ ລາຍງານຜົນການເຄື່ອນໄຫວປະຈໍາປີ 2019: | |

| | | | | |
|---|---|---|---|---|
| | | ໃນມາດຕາ 29 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້, ເປັນໄລຍະເວລາ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ).<br>• ຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ໃນການນຳເຂົ້າທຸກປະເພດສິນຄ້າ ທີ່ນຳໃຊ້ເຂົ້າໃນວຽກງານສະກັດກັ້ນ, ກັນການລະບາດ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ເຊັ່ນ: ຜ້າປິດປາກ-ດັງ, ນ້ຳຢາລ້າງມື, ເຄື່ອງອຸປະກອນການແພດ ແລະ ອື່ນໆ ທີ່ຈຳເປັນ. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບກະຊວງສາທາລະນະສຸກ ເຮັດບັນຊີລາຍການສິນຄ້າ ທີ່ຕ້ອງການນຳເຂົ້າໂດຍຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ໃຫ້ລະອຽດ, ແລ້ວສົ່ງໃຫ້ກະຊວງການເງິນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.<br>• ໃຫ້ເລື່ອນການຊຳລະພັນທະອາກອນ ຂອງຜູ້ປະກອບການທີ່ປິ່ນອ້ອມທຸລະກິດການທ່ອງທ່ຽວ ເປັນໄລຍະເວລາ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2020). ມອບໃຫ້ກະຊວງ ຖວທ ເປັນ ໃນກາງ ປະສານ.<br>• ໃຫ້ເລື່ອນການໄລ່ລຽງອາກອນປະຈຳປີ 2019 ຂອງພາກທຸລະກິດ ໄປເປັນ 30 ເມສາ.<br>• ໃຫ້ຕໍ່ເວລາການຊຳລະຄ່າທຳນຽມທາງໄປຈົນຮອດ | | |

| | | | | |
|---|---|---|---|---|
| | | 30 ມິຖຸນາ ປີ 2020; | | |
| ຕິດພັນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 1. ໂຄສະນາ ເຜີຍແຜ່ ນະໂຍບາຍການອຸດໜູນວ່າງງານໃຫ້ແກ່ຜູ້ປະກອບການ ແລະ ຜູ້ອອກແຮງງານ ຢ່າງເລີກເຊິ່ງ ແລະ ກວ້າງຂວາງ, ພ້ອມທັງ ພິຈາລະນາການຮ້ອງຂໍການອຸດໜູນວ່າງວຽກ ພາຍໃນ 30 ວັນ ຕາມທີ່ໄດ້ລະບຸໃນມາດຕາ 95 ຂອງກົດໝາຍປະກັນສັງຄົມ ເພື່ອຊ່ວຍເຫຼືອຜູ້ວ່າງງານ ໃນຊ່ວງວິກິດຂອງການລະບາດຂອງເຊື້ອໄວຣັສ ໂຄວິດ-19;<br>2. ພິຈາລະນາ ການໃຫ້ເງິນອຸດໜຸນ ແກ່ພະນັກງານ ກໍລະນີທີ່ຖືກ ພັກງານຊົ່ວຄາວ ໃນໄລຍະ ການແຜ່ລະບາດຂອງເຊື້ອໄວຣັສ COVID-19;<br>3. ພິຈາລະນາເລື່ອນເວລາຊຳລະການປະກອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແບບບັງຄັບ ຂອງປີ 2020 ດ້ວຍ , ເພື່ອຫຼຸດຜ່ອນພາລະຂອງຜູ້ປະກອບການ ໃນຊ່ວງການລະບາດຂອງ ເຊື້ອໄວຣັສ ໂຄວິດ-19, | ➢ ຜົນກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນເມສາ 2020 ວັນທີ 23 ເມສາ 2020, ທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ມີຄື: ຂໍ້ II.4 ເຫັນດີໃຫ້ປະຕິບັດເງິນອຸດໜູນຕໍ່ແຮງງານ ສຳລັບແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມຕາມກົດໝາຍປະກັນສັງຄົມກຳນົດ. ພ້ອມທັງໃຫ້ຄົ້ນຄວ້າມາດຕະການຮອງຮັບໄວ້ແຕ່ຫົວທີ ກໍລະນີຜົນກະທົບຫາກແກ່ຍາວເວລາໄປ. ພ້ອມກັນນັ້ນ ກໍໃຫ້ຖືໂອກາດນີ້, ໂຄສະນາດຶງດູດ ແລະ ຂະຫຍາຍສະມາຊິກປະກັນສັງຄົມໃຫ້ເພີ່ມຂຶ້ນໃນຕໍ່ໜ້າ. ສຳລັບແຮງງານທີ່ຢູ່ນອກລະບົບ, ໃຫ້ຄົ້ນຄວ້າການປະຕິບັດນະໂຍບາຍໃນຮູບແບບຊ່ວຍເຫຼືອດ້ານສັງຄົມສົງເຄາະ ຕາມດຳລັດວ່າດ້ວຍສັງຄົມສົງເຄາະສະບັບເລກທີ 169/ລບ, ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບໃຫ້ອຳນາດການປົກ ຄອງແຕ່ລະຂັ້ນ ສັງລວມຈຳນວນຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອຕາມເງື່ອນໄຂຕົວຈິງ ໃຫ້ຊັດເຈນກ່ອນ ພ້ອມທັງຄິດໄລ່ອັດຕານະໂຍບາຍທີ່ເໝາະສົມແລະຄວາມຕ້ອງການທາງດ້ານງົບປະມານທັງໝົດ | • ມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນເມສາ 2020, ເລກທີ 05/ລບ ລົງວັນທີ 24 ເມສາ 2020<br>• ໜັງສືສະເໜີ ຈາກ ລັດຖະມົນຕີກະຊວງແຮງງານ ຫາ ນາຍົກລັດຖະມົນຕີ, ເລກທີ 1056/ຮສສ ລົງວັນທີ 07 ເມສາ 2020 ເລື່ອງ ຂໍທິດຊີ້ນຳກ່ຽວກັບການແກ້ໄຂນະໂຍບາຍດ້ານແຮງງານ ແລະ ສະຫວັດດີການສັງຄົມໃນຊ່ວງການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ 19 | • ຍັງບໍ່ມີການຈັດຕັ້ງປະຕິບັດ |

| | | | | |
|---|---|---|---|---|
| | | ຢ່າງຊັດເຈນ, ຈາກນັ້ນ ຈຶ່ງສະເໜີລັດຖະບານ ພິຈາລະນາຕົກລົງ.<br>➢ ລັດຖະມົນຕີກະຊວງແຮງງານ ໄດ້ຍື່ນໜັງສະເໜີ ເລກທີ 1056/ຮສສ ລົງວັນທີ 07 ເມສາ 2020 ຫາ ທ່ານນາຍົກລັດຖະມົນຕີເພື່ອພິຈາລະນາອະນຸມັດໃຫ້:<br>▪ ວິສາຫະກິດທີ່ຖືກ ສັ່ງຢຸດກິດຈະການ 100 % ສາມາດຢຸດມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມບໍ່ເກີນສາມເດືອນ (ເມສາ ຫາ ມິຖຸນາ 2020)<br>▪ ວິສາຫະກິດທີ່ເຄື່ອນໄຫວບໍ່ເຕັມສ່ວນແຕ່ຍັງຈ່າຍຄ່າແຮງງານປົກກະຕິສາມາດເລື່ອນມອບເງິນສົມທົບກອງທຶນປະກັນສັງຄົມຂອງເດືອນ ເມສາ ຫາ ມິຖຸນາ ໄປມອບຢູ່ເດືອນ ກັນຍາ ຫາ ພະຈິກ 2020<br>▪ ວິສາຫະກິດທີ່ເຄື່ອນໄຫວປົກກະຕິ ແມ່ນໃຫ້ມອບເງິນສົມທົບປົກກະຕິ<br>▪ ໃນໄລຍະຢຸດ ຫຼື ເລື່ອນມອບເງິນປະກັນສັງຄົມ ຜູ້ປະກັນຕົນ ແມ່ນໄດ້ຮັບສິດປິ່ນປົວສຸຂະພາບ ແລະອຸດໜູນໄລຍະສັ້ນຕາມປົກກະຕິ | | |

| | | | | |
|---|---|---|---|---|
| | | ▪ ລັດຖະບານຈ່າຍເງິນຊ່ວຍໜູນ 500,000 ກີບ ໄລຍະສອງເດືອນ (ພຶດສະພາ ແລະ ມິຖຸນາ) ຕໍ່ຜູ້ອອກແຮງງານ ທີ່ຍັງຢູ່ໃນຖານະເປັນຜູ້ປະກັນຕົນ (ເຊິ່ງບໍ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ) ໃນຫົວໜ່ວຍແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມທີ່ຖືກສັ່ງຢຸດກິດຈະການເນື່ອງຈາກ ໄວຣັສ ໂຄວິດ 19<br>▪ ຜູ້ໃຊ້ແຮງງານສືບຕໍ່ຈ່າຍເງິນເດືອນ ຫຼື ຄ່າແຮງງານ ຂອງເດືອນເມສາ ປີ 2020 ໃຫ້ຜູ້ອອກແຮງງານ ປົກກະຕິ. ຖ້າຫົວໜ່ວຍໃດບໍ່ສາມາດຈ່າຍໄດ້ ປົກກະຕິ ແມ່ນໃຫ້ຈ່າຍ 50%ຂອງເງິນເດືອນ ແຕ່ບໍ່ໃຫ້ຫຼຸດຄ່າແຮງງານຕໍ່າສຸດ.<br>▪ ກອງທຶນປະກັນສັງຄົມຮັບຜິດຊອບການອຸດໜູນອື່ນໆຕາມປົກກະຕິ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການປະກັນສັງຄົມ<br>**ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລົງວັນທີ 02 ເມສາ 2020 ລະບຸໃຫ້:**<br><br>ກະຊວງແຮງງານເລື່ອນການເກັບ ຊຳລະພັນທະການປະກອບສ່ວນປະກັນສັງຄົມແບບບັງຄັບ ຂອງຫົວໜ່ວຍທຸລະກິດ ທີ່ໄດ້ຮັບຜົນກະທົບ ເປັນໄລຍະເວລາ 3 | | |

| | | | | |
|---|---|---|---|---|
| | | ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2020). | | |
| ຕິດພັນກັບ ທະນາຄານ ແຫ່ງ ສປປ ລາວ | **1.** ຮ່ວມປຶກສາຫາລື ກັບ ບັນດາທະນາຄານ ທຸລະກິດ ແລະ ສະຖາບັນການເງິນ ຈຸນລະພາກ ເພື່ອ ພິຈາລະນາ ຄວາມເປັນໄປໄດ້ ໃນການກຳນົດບາງມາດຕະການ ໃນການໃຫ້ຄວາມຊ່ວຍເຫຼືອ ລູກໜີ້ ໃນໄລຍະການແຜ່ລະບາດຂອງເຊື້ອໄວຣັສ COVID-19 ເຊັ່ນ: ການເລື່ອນ ຫຼື ຜ່ອນຊຳລະດອກເບ້ຍ ທະນາຄານ, ແລະ ອື່ນໆ.<br>2. ສະເໜີໃຫ້ ທະນາຄານ ແຫ່ງ ສປປ ລາວ ພິຈາລະນາ ຫຼຸດຜ່ອນຂໍ້ກຳນົດໃນການຈັດຊັ້ນໜີ້ ແລະ ຂໍ້ກຳນົດການຊຳລະໜີ້ ຂອງລູກຄ້າສິນເຊື່ອຂອງສະຖາບັນການເງິນຈຸນລະພາກ ຊົ່ວຄາວ, ເພື່ອ ຫຼຸດຜ່ອນຜົນກະທົບຕໍ່ລູກຄ້າສິນເຊື່ອ. (ໃໝ່)<br>**3.** ພິຈາລະນາ ເພີ່ມສະພາບຄ່ອງໃນລະບົບ | **1.** ທະນາຄານແຫ່ງ ສປປ ລາວ ແຈ້ງໃຫ້ ທະນາຄານ ທຸລະກິດ ແລະ ສະຖາບັນການເງິນ ເລື່ອນເວລາຊຳລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍ, ປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມໃຫ້ລູກໜີ້ ຕາມເຫັນວ່າສົມຄວນ<br>2. ທະນາຄານແຫ່ງ ສປປ ລາວ ແຈ້ງໃຫ້ ທະນາຄານ ທຸລະກິດ ແລະ ສະຖາບັນການເງິນ ຈະໄດ້ຮັບນະໂຍບາຍຜ່ອນຜັນຍົກເວັ້ນການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້<br>**ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລົງວັນທີ 02 ເມສາ 2020 ລະບຸໃຫ້:**<br>1. ເຫັນດີໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດການປັບຫຼຸດອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ແລະ ຫຼຸດອັດຕາສ່ວນເງິນແຮຝາກບັງຄັບຂອງທະນາຄານທຸລະກິດລົງ ຕາມຄວາມເໝາະສົມໃນແຕ່ລະໄລຍະ.<br>2. ເຫັນດີໃຫ້ທະນາຄານແຫ່ງ ສປປ ລາວ ກຳນົດໃຫ້ | ຂໍ້ຕົກລົງ ເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກ ສາຍພັນໃໝ່ (COVID-19) | ບາງທະນາຄານ ເລີ່ມມີການຈັດຕັ້ງປະຕິບັດ ເຊິ່ງ ທະນາຄານ ແຫ່ງ ສປປ ລາວ ກຳລັງຮອບຮອມຂໍ້ມູນບັນດາທະນາຄານທີ່ມີການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ |

| | | | | |
|---|---|---|---|---|
| | ທະນາຄານ ເພື່ອໃຫ້ພາກທຸລະກິດ ສາມາດເຂົ້າຫາເງິນກູ້ໄດ້ຫຼາຍຂຶ້ນ ເຊັ່ນ ຄົ້ນຄວ້າຄວາມເປັນໄປໄດ້ໃນການຫຼຸດ ອັດຕາເງິນຄໍ້າປະກັນເງິນຝາກຂອງ ທະນາຄານທຸລະກິດ, ທີ່ກຳນົດໂດຍ ທະນາຄານແຫ່ງ ສປປ ລາວ, ເພື່ອເຮັດ ໃຫ້ມີເງິນໝູນວຽນໃນລະບົບ ຫຼາຍຂຶ້ນ. | ບັນດາທະນາຄານທຸລະກິດ ປະຕິບັດນະໂຍບາຍ ສິນເຊື່ອເພື່ອແກ້ໄຂຜົນກະທົບຈາກການລະບາດ ຂອງພະຍາດ COVID-19 ເປັນຕົ້ນ: ນະໂຍບາຍ ເລື່ອນເວລາຊຳລະໜີ້ຕົ້ນທຶນ ແລະ ດອກເບ້ຍ, ປັບຫຼຸດອັດຕາດອກເບ້ຍ, ສະໜອງເງິນກູ້ບ້ວງໃໝ່ ເງິນກູ້ຂອງບັນດາຫົວໜ່ວຍທຸລະກິດ, ການປັບ ໂຄງສ້າງໜີ້, ການຈັດຊັ້ນໜີ້ ແລະ ອື່ນໆ ຕາມທີ່ ໄດ້ກຳນົດໃນຂໍ້ຕົກລົງ ສະບັບເລກທີ 238/ທຫລ, ລົງວັນທີ 26 ມິນາ 2020. | | |
| ຕິດພັນກັບກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ສາທາລະນະສຸກ ແລະ ກະຊວງການ ເງິນ | 1. ອຳນວຍຄວາມສະດວກໃຫ້ແກ່ການນຳ ເຂົ້າ ແລະ ສົ່ງອອກ ສິນຄ້າ[1], ໂດຍ ສະເພາະ ແມ່ນ ຫຼຸດຜ່ອນຂອດຂັ້ນ, ຄ່າ ທຳນຽມ, ຄ່າພາສີ ທີ່ຕິດພັນກັບການນຳ ເຂົ້າສິນຄ້າປະເພດໜ້າກາກ, ເຈວລ້າງມື, ຢາປົວພະຍາດ ແລະ ເຄື່ອງອຸປະກອນ ການແພດອື່ນໆ ພ້ອມທັງພິຈາລະນາລົບ ລ້າງການກຳນົດລາຄາຂອງສິນຄ້າປະເພດ | • ກະຊວງການຄ້າ ອອກ ແຈ້ງການ ຫາ ພະແນກອຸດ ສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ເລື່ອງການກຳນົດ ລາຄາ ຂາຍ ຜ້າອັດປາກ-ດັງ ເລກທີ 0374/ອຄ.ກຄພນ ລົງວັນທີ 08 ເມສາ 2020, ໂດຍແຈ້ງໃຫ້ ພະ ແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ປະສານກັບບໍລິສັດນຳເຂົ້າ | • ແຈ້ງການ ຫາ ພະແນກອຸດ ສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ເລື່ອງການກຳນົດ ລາຄາຂາຍ ຜ້າ ອັດປາກ-ດັງ ເລກທີ 0374/ ອຄ.ກຄພນ ລົງວັນທີ 08 ເມສາ | • ການຍົກເວັ້ນພາສີ ອາກອນ ແລະ ຄ່າທຳນຽມຕ່າງໆ ໃນ ການນຳເຂົ້າທຸກປະເພດສິນຄ້າ ທີ່ນຳໃຊ້ເຂົ້າໃນວຽກງານສະກັດ ກັ້ນ, ກັນການລະບາດ ແມ່ນກຳ ລັງຖືກຈັດຕັ້ງປະຕິບັດ |

[1] ໝາຍເຫດ: ກະຊວງປ້ອງກັນຄວາມສະຫງົບ ໄດ້ອອກ ແຈ້ງການ ເລກທີ 703/ກຕມ, ລົງວັນທີ 30 ມີນາ 2020, ໂດຍກຳນົດໃຫ້ບຸກຄົນທີ່ເດີນທາງເຂົ້າ ສປປ ລາວ ເພື່ອຈຸດປະສົງຂົນສົ່ງສິນຄ້າ ຈຳເປັນຕ້ອງມີໜັງສືຢັ້ງຢືນສຸຂະພາບຈາກແພດ. ເຫັນວ່າອາດເປັນການສ້າງຂອດຂັ້ນທີ່ບໍ່ຈຳເປັນ ເຊິ່ງອາດເປັນການກີດຂວາງການນຳເຂົ້າສິນຄ້າທີ່ຈຳເປັນ ໃນຊ່ວງວິກິດນີ້.

| | | | | |
|---|---|---|---|---|
| | ດັ່ງກ່າວ, ເນື່ອງຈາກການກຳນົດລາຄາ ອາດເປັນສາເຫດທີ່ເຮັດໃຫ້ຜູ້ປະກອບການບໍ່ສາມາດນຳເອົາສິນຄ້າປະເພດດັ່ງກ່າວມາຈຳໜ່າຍໄດ້ ຈຶ່ງເຮັດໃຫ້ສິນຄ້າຂາດຕະຫຼາດຢ່າງຮຸນແຮງ.<br>2. ສະເໜີໃຫ້ຫຼຸດຜ່ອນຂອດຂັ້ນ, ຄ່າທຳນຽມ, ທີ່ຕິດພັນກັບການນຳເຂົ້າວັດຖຸດິບມາຜະລິດ ແລະ ການ ສົ່ງອອກສິນຄ້າທີ່ຜະລິດພາຍໃນປະເທດ.<br>3. ສະເໜີໃຫ້ຂະແໜງການກ່ຽວຂ້ອງຂອງພາກລັດ ພິຈາລະນາ ຫຼຸດຂອດຂັ້ນ ການເຂົ້າຫາແຫຼ່ງທຶນ ຂອງວິສາຫະກິດ ຂະໜາດນ້ອຍ ແລະ ກາງ ໃຫ້ສະດວກ ແລະ ວ່ອງໄວ ຍິ່ງຂຶ້ນ. | ອຸປະກອນການແພດ, ບໍລິສັດການຢາຂອງແຂວງ ຫຼື ຫົວໜ່ວຍທຸລະກິດຕ່າງໆ ທີ່ມີເງື່ອນໄຂ, ມີທຶນ ແລະ ສາມາດນຳເຂົ້າຜ້າອັດປາກມາໄດ້ ແລະ ບໍລິສັດທີ່ມີຈຸດປະສົງໃນການຈຳໜ່າຍ ຜ້າອັດປາກດັ່ງ, ເຊິ່ງບໍລິສັດ ເຫຼົ່ານີ້ ຕ້ອງໄດ້ມາລົງທະບຽນກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.<br>• ກະຊວງການຄ້າ ໄດ້ອອກແຈ້ງການ ເລກທີ 0328/ອຄ.ກຄພນ ລົງວັນທີ 26 ມີນາ 2020 ເລື່ອງ ການກຳນົດລາຄາຜ້າອັດປາກ, ດັ່ງ ແຕ່ລະຊະນິດ ເພື່ອປ່ຽນແທນແຈ້ງການ ສະບັບເລກທີ 0142/ອຄ.ກຄພນ ລົງວັນທີ 7 ກຸມພາ 2020 . ຂໍ້ 2. ກົດນົດ ລາຄາລາຄາຜ້າອັດປາກ, ດັ່ງ ທຸກຊະນິດ ໃຫ້ຄິດໄລ່ ດ້ວຍການ ເອົາຕົ້ນທຶນການນຳເຂົ້າ ບວກກຳໄລຂາຍຍົກ 20% ແລະ ກຳໄລຂາຍຍ່ອຍ 10%<br>• ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ເຫັນດີໃຫ້ ຍົກເວັ້ນພາສີ ອາກອນ ແລະ ຄ່າທຳນຽມຕ່າງໆ ໃນການນຳເຂົ້າທຸກປະເພດສິນຄ້າທີ່ນຳ | 2020,<br>• ແຈ້ງການ ເລກທີ 0328/ອຄ.ກຄພນ ລົງວັນທີ 26 ມີນາ 2020 ເລື່ອງ ການກຳນົດລາຄາຜ້າອັດປາກ, ດັ່ງ ແຕ່ລະຊະນິດ<br>• ແຈ້ງການເລກທີ 185/ທສວ, ລົງວັນທີ 03 ເມສາ 2020 ກ່ຽວກັບການປ່ອຍສິນເຊື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ບ້ວງເງິນ 100ຕື້ ໃຫ້ຂະແໜງບູລິມະສິດ (ກຳລັງຊອກຫາແຈ້ງການ) | |

| | | | | |
|---|---|---|---|---|
| | | ໃຊ້ເຂົ້າໃນວຽກງານສະກັດກັ້ນ, ກັນການລະບາດ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານ ພະຍາດ ໂຄວິດ 19 ເຊັ່ນ ຜ້າປິດປາກ, ນໍ້າຢາລ້າງ ມື ເຄື່ອງອຸປະກອນການແພດ ແລະ ອື່ນໆ. ໃຫ້ ກະຊວງການຄ້າ ສົມທົບກັບກະຊວງ ສາທາລະນະ ສຸກ ເຮັດບັນຊີລາຍການສິນຄ້າ ທີ່ຕ້ອງການນໍາເຂົ້າ ໃຫ້ລະອຽດ ແລ້ວສົ່ງໃຫ້ກະຊວງການເງິນເພື່ອຈັດ ຕັ້ງປະຕິບັດ | | |
| ຕິດພັນກັບກະຊວງ ພະລັງງານ ແລະ ບໍ່ ແຮ່ | 1. ພິຈາລະນາ ຫຼຸດອັດຕາຄ່າໄຟຟ້າ ໃຫ້ແກ່ ທຸລະກິດທຸກໆຂະແໜງການ ໃນຊ່ວງ ໄລຍະການແຜ່ລະບາດຂອງໄວຣັສ (ໃ ໝ່) | ➢ ຜົນກອງປະຊຸມລັດຖະບານ ສະໄໝສາມັນປະຈໍາ ເດືອນເມສາ 2020 ວັນທີ 23 ເມສາ 2020, ທີ່ ຕິດພັນກັບຂໍ້ສະເໜີຂອງ ສຄອຊ ມີຄື: ຂໍ້ II.7. ສໍາ ລັບຂໍ້ສະເໜີຂໍຫຼຸດອັດຕາອາກອນມູນຄ່າເພີ່ມໄຟຟ້າ ແລະ ນໍ້າປະປານັ້ນ, ໃຫ້ກະຊວງການເງິນ ສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າລະອຽດຕື່ມ ເພື່ອບໍ່ໃຫ້ມີຜົນກະທົບຕາມມາ.<br><br>➢ ກະຊວງພະລັງງານ ແລະ ບໍ່ແຮ່ ແຈ້ງເຖິງລັດວິ ສາຫະກິດ ໄຟຟ້າລາວ (ເລກທີ 0438/ພບ ລົງວັນ ທີ 08 ເມສາ 2020) ເພື່ອເລີ່ມຈັດຕັ້ງປະຕິບັດ ໂຄງສ້າງລາຄາໄຟຟ້າ ສະບັບປັບປຸງໃໝ່ ເລີ່ມແຕ່ | ➢ ມະຕິຕົກລົງ ກອງປະຊຸມ ລັດຖະບານສະໄໝສາມັນປະຈໍາ ເດືອນເມສາ 2020, ເລກທີ 05/ລບ ລົງວັນທີ 24 ເມສາ 2020<br><br>➢ ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເຖິງລັດວິສາຫະກິດ ໄຟຟ້າລາວ ເລກທີ 0438/ພບ ລົງວັນທີ 08 ເມສາ 2020 ເລື່ອງການປັບປຸງໂຄງສ້າງລາຄາ ໄຟຟ້າ ເລີ່ມແຕ່ເດືອນ ພຶດສະພາ | • ອີງຕາມ ບົດລາຍງານ ວັນທີ 23 ເມສາ ຂອງ ໜ່ວຍງານນະໂຍບາຍ ການເງິນ (ນໍາໂດຍ ປອ ບຸນເຫຼືອ ສິນ ໄຊວໍຣະວົງ) ຫາ ທ່ານ ສົມດີ ດວງດີ ລມຕ ກະຊວງການເງິນ ມີຄື: ການ ສະເໜີຂໍຫຼຸດ ອມພ ການບໍລິການ ໄຟຟ້າ, ນໍ້າປະປາ, ແລະ ອາກອນ ຊົມໃຊ້ ສໍາລັບການບໍລິການອິນເຕີ ເນັດ ແມ່ນບໍ່ສາມາດຈັດຕັ້ງປະຕິບັດ ໄດ້ ເນື່ອງຈາກຈະເປັນຜົນກະທົບວິ ກິດການດ້ານການເງິນງົບປະມານ |

| | | | | |
|---|---|---|---|---|
| | | ເດືອນ ພຶດສະພາ 2020 ເຖິງ ທັນວາ 2025. ໄດ້ມີການຫຼຸດລາຄາຄ່າໄຟ ໃຫ້ແກ່ລູກຄ້າບາງປະເພດ ເຊັ່ນ: (ສຳລັບປີ 2020 ຈາກ ເດືອນພຶດສະພາ)<br>➢ **ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລົງວັນທີ 02 ເມສາ 2020 ລະບຸໃຫ້**<br>ຄົ້ນຄວ້າ ຜ່ອນຜັນລາຄາ ແລະ ຕໍ່ເວລາ ໃນການຊຳລະຄ່າໄຟຟ້າ ແລະ ນ້ຳປະປາຂອງຜູ້ຊົມໃຊ້ຄົວເຮືອນ ແລະ ພາກທຸລະກິດ | 2020 ເຖິງ ທັນວາ 2025 | ຂອງປະເທດໃນໄລຍະກາງ ຫາ ຍາວ<br>ສຳລັບການຈັດຕັ້ງປະຕິບັດ ຖ້າ ສົມທຽບກັບ ອັດຕາຄ່າໄຟຟ້າໂຕເກົ່າ ສຳລັບປະເພດທີ່ຢູ່ອາໄສ: ຊົມໃຊ້ ໄຟຟ້າແຕ່ 26 ຫາ 150 ລາຄາເກົ່າແມ່ນ kWh/ເດືອນ ແມ່ນ ອັດຕາ 422 ກີບ/kWh. ຊົມໃຊ້ ໄຟຟ້າ ຫຼາຍກວ່າ 150 kWh/ເດືອນ ຂຶ້ນໄປ ຄິດໄລ່ອັດຕາ 1019 ກີບ/kWh. |
| ຕິດພັນກັບ ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ<br>ລັດວິສາຫະກິດ ນ້ຳປະປາ | 2. ພິຈາລະນາ ຫຼຸດອັດຕາຄ່າ ນ້ຳປະປາ ໃຫ້ແກ່ທຸລະກິດທຸກໆຂະແໜງການ ໃນຊ່ວງໄລຍະການແຜ່ລະບາດຂອງໄວຣັສ (ໃໝ່) | ➢ ຜົນກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນເມສາ 2020 ວັນທີ 23 ເມສາ 2020, ທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ມີຄື: ຂໍ້ II.7. ສຳລັບຂໍ້ສະເໜີຂໍຫຼຸດອັດຕາອາກອນມູນຄ່າເພີ່ມໄຟຟ້າ ແລະ ນ້ຳປະປານັ້ນ, ໃຫ້ກະຊວງການເງິນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າລະອຽດຕື່ມເພື່ອບໍ່ໃຫ້ມີຜົນກະທົບຕາມມາ.<br>ລັດວິສາຫະກິດນ້ຳປະປານະຄອນຫຼວງ ລາຍງານ (ເລກທີ 0555/ນປນຄ, ວັນທີ 10 ເມສາ 2020) ຫາ ຮອງ | ➢ ມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນເມສາ 2020, ເລກທີ 05/ລບ ລົງວັນທີ 24 ເມສາ 2020<br>➢ ບົດລາຍງານ ຂອງ ລັດວິສາຫະກິດນ້ຳປະປານະຄອນຫຼວງ ເລກທີ 0555/ນປນຄ, ລົງວັນທີ 10 ເມສາ 2020 ຫາ ຮອງ ລມຕ | ອີງຕາມ ບົດລາຍງານ ວັນທີ 23 ເມສາ ຂອງ ໜ່ວຍງານນະໂຍບາຍການເງິນ (ນຳໂດຍ ປອ ບຸນເຫຼືອ ສິນໄຊວໍຣະວົງ) ຫາ ທ່ານ ສົມດີ ດວງດີ ລມຕ ກະຊວງການເງິນ ມີຄື: ການສະເໜີຂໍຫຼຸດ ອມພ ການບໍລິການໄຟຟ້າ, ນ້ຳປະປາ, ແລະ ອາກອນຊົມໃຊ້ ສຳລັບການບໍລິການອິນເຕີເນັດ ແມ່ນບໍ່ສາມາດຈັດຕັ້ງປະຕິບັດ |

| | | | | |
|---|---|---|---|---|
| | | ລມຕ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຫົວໜ້າໜ່ວຍງານນະໂຍບາຍທີ່ຕິດພັນກັບພາກປະຊາຊົນ ແລະ ສັງຄົມ ເພື່ອຂໍອະນຸມັດໃຫ້:<br>▪ ຫຼຸດລາຄາ ຄ່ານໍ້າປະປາ ໃຫ້ຜູ້ຊົມໃຊ້ ປະເພດຄົວເຮືອນ ເປັນ 5% ແລະ ສະເໜີຍົກເລີກການເກັບອາກອນຊົມໃຊ້ 10% ໃນຊ່ວງເດືອນ 5, 6, 7 ປີ 2020<br>▪ ລູກຄ້າປະເພດທຸລະກິດທີ່ໃຊ້ນໍ້າປະປາເປັນວັດຖຸດິບຫຼັກໃນການຜະລິດສິນຄ້າ ສາມາດເລື່ອນການຊໍາລະຈາກປົກກະຕິ 1 ເດືອນ ໃຫ້ສາມາດຈ່າຍພາຍໃນ 2 ເດືອນ<br>▪ ລູກຄ້າປະເພດທຸລະກິດອື່ນໆ ສາມາດເລື່ອນການຊໍາລະຈາກປົກກະຕິ 1 ເດືອນ ໃຫ້ສາມາດຈ່າຍພາຍໃນ 2 ເດືອນ, ພ້ອມທັງສະເໜີຍົກເວັ້ນອາກອນລາຍໄດ້ 10%<br>**ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລົງວັນທີ 02 ເມສາ 2020 ລະບຸໃຫ້**<br>ຄົ້ນຄວ້າ ຜ່ອນຜັນລາຄາ ແລະ ຕໍ່ເວລາ ໃນການຊໍາລະ | ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຫົວໜ້າໜ່ວຍງານນະໂຍບາຍທີ່ຕິດພັນກັບພາກປະຊາຊົນ ແລະ ສັງຄົມ | ໄດ້ ເນື່ອງຈາກຈະເປັນຜົນກະທົບວິກິດການດ້ານການເງິນງົບປະມານຂອງປະເທດໃນໄລຍະກາງ ຫາ ຍາວ |

| | | | | |
|---|---|---|---|---|
| | | ຄ່າໄຟຟ້າ ແລະ ນໍ້າປະປາຂອງຜູ້ຊົມໃຊ້ຄົວເຮືອນ ແລະ ພາກທຸລະກິດ | | |
| ຕິດພັນກັບກະຊວງ ໄປສະນີ, ໂທລະຄົມ ແລະ ການສື່ສານ | 3. ພິຈາລະນາ ຫຼຸດອັດຕາຄ່າ ອິນເຕີເນັດ ໃຫ້ແກ່ທຸລະກິດທຸກໆຂະແໜງການ ໃນຊ່ວງໄລຍະການແຜ່ລະບາດຂອງໄວຣັສ (ໃໝ່) | | | ລ່າສຸດ ລາວ ໂທລະຄົມໄດ້ແຈ້ງຫຼຸດລາຄາ Internet ດ້ວຍການສ້າງ Internet Packages ສໍາລັບຊ່ວງ COVID-19 ຄື ລາຄາ 3000 ກີບ ໃຊ້ໄດ້ 1 ວັນ (2GB), 10,000 ກີບ ໃຊ້ໄດ້ 7 ວັນ, (2GB) |
| ຕິດພັນກັບສໍານັກງານ ນາຍົກລັດຖະມົນຕີ | 1. ພິຈາລະນາ ຕັ້ງກອງທຶນສະເພາະເພື່ອບັນເທົາຜົນກະທົບຈາກການລະບາດຂອງ ເຊື້ອໄວຣັສ COVID-19 ຫຼື ນໍາໃຊ້ກອງທຶນທີ່ມີຢູ່ ເຊັ່ນ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊ່ວຍຜູ້ປະກອບການ ຊໍາລະດອກເບ້ຍທະນາຄານ ໃນໄລຍະນີ້, ດ້ວຍການກໍານົດ ກຸ່ມທຸລະກິດເປົ້າໝາຍ ທີ່ມີຜົນກະທົບຕໍ່ເສດຖະກິດ ແລະ ການຈ້າງງານຫຼາຍທີ່ສຸດ ເຊັ່ນ ທຸລະກິດປະເພດ ໂຮງແຮມ, ແລະ ໂຮງຈັກ | | | ບໍ່ຖືກຈັດຕັ້ງປະຕິບັດທັງສອງຂໍ້ |

| | | | | |
|---|---|---|---|---|
| | ໂຮງງານ ເປັນຕົ້ນ ໃນການໃຫ້ການຊ່ວຍເຫຼືອດັ່ງກ່າວ.<br>**2.** ພິຈາລະນາ ເພີ່ມການໃຊ້ຈ່າຍຂອງພາກລັດ ໃນການກໍ່ສ້າງໂຄງລ່າງພື້ນຖານ, ການຄວບຄຸມການລະບາດຂອງພະຍາດ ແລະ ໄວຣັສ ແລະ ການຈັດຕັ້ງປະຕິບັດໂຄງການຕ່າງໆ, ນໍາໃຊ້ ກອງທຶນບັນເທົາໄພພິບັດ, ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ກອງທຶນອື່ນໆ ທີ່ມີຢູ່ ຫຼື ລະດົມທຶນຈາກອົງກອນພັດທະນາສາກົນ ເພື່ອຮັບໃຊ້ມາດຕະການກະຕຸ້ນເສດຖະກິດ, | | | |

2. ບົດສະເໜີ ຂອງ ສຄອຊ ເລກທີ 0340/ສຄອຊ, ວັນທີ 17 ເມສາ 2020 ເລື່ອງ ສະເໜີການພິຈາລະນາແກ້ໄຂບັນຫາຮີບດ່ວນ ຕໍ່ຜົນກະທົບຂອງມາດຕະການສະກັດກັ້ນ, ປ້ອງກັນ ແລະ ຄວບຄຸມພະຍາດ COVID-19

| ຂະແໜງການ ກ່ຽວຂ້ອງ | ຂໍ້ສະເໜີ | ຄວາມຄືບໜ້າ | ເອກະສານອ້າງອີງ | ໝາຍເຫດ |
|---|---|---|---|---|
| ຕິດພັນກັບກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ກະຊວງ ສາທາລະນະສຸກ | 1. ສະເໜີໃຫ້ ລັດຖະບານ ພິຈາລະນາທຸກໆຄຳຮ້ອງຂອງ ບັນດາຫົວໜ່ວຍວິສາຫະກິດ, ໂດຍສະເພາະແມ່ນໂຮງງານ ອຸດສາຫະກຳປຸງແຕ່ງ, ບັນດາໂຮງງານປັ່ນອ້ອມ ຂະແໜງການຜະລິດ, ໂຮງງານຕັດຫຍິບ, ຮ້ານອາຫານ ແລະ ຮ້ານຄ້າ ຕ່າງໆ ລວມເຖິງໂຄງການທີ່ຢູ່ ໃນ ເຂດ ຫຼື ນອກເຂດເສດຖະກິດພິເສດແລະເຂດເສດຖະກິດສະເພາະ ທີ່ມີເງື່ອນໄຂໄດ້ມາດຕະຖານ ໃນການ ປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ຕາມ ຄຳແນະນຳຂອງພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນເຂດທີ່ບໍ່ມີການແຜ່ລະບາດຂອງພະຍາດດັ່ງກ່າວໃຫ້ສາມາດດຳເນີນການຜະລິດ ແລະ ການບໍລິການຂອງຕົນໄດ້ໂດຍໄວ. | ➢ ອີງຕາມແຈ້ງການຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ເລກທີ 524/ຫສນຍ ລົງວັນທີ 01.05.2020 ເລື່ອງ ການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ 19 ໃນໄລຍະແຕ່ວັນທີ 04-17 ພຶດສະພາ 2020, ໃນ ຂໍ້ 4. 4.ລະບຸເຫັນດີໃຫ້ປະຕິບັດມາດຕະການຜ່ອນຜັນຈຳນວນໜຶ່ງ (ຂໍ້ 6.5: ມາດຕະການຜ່ອນຜັນນີ້ ແມ່ນມາດຕະການຊົ່ວຄາວ ເຊິ່ງຈະເລີ່ມມີຜົນສັກສິດ ນັບແຕ່ວັນທີ 04 ຫາວັນທີ 17 ພຶດສະພາ 2020, ແລ້ວຈະມີການທົບທວນຄືນ, ກໍລະນີມີການປ່ຽນແປງ ລັດຖະບານຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ), ໃນມາດຕະການຜ່ອນຜັນມີເນື້ອໃນທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ຄື:<br>○ ຂໍ້ 4.1 ອະນຸຍາດໃຫ້ສຳນັກງານອົງການຂອງພັກ-ລັດ, ສຳນັກງານຂອງບໍລິສັດ ເປີດດຳເນີນການ ໂດຍ ໃຫ້ພະນັກງານລັດຖະກອນໝູນວຽນມາເຮັດວຽກເປັນປົກກະຕິ ແຕ່ຕ້ອງໃຫ້ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ, | • ແຈ້ງການຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ເລກທີ 524/ຫສນຍ ລົງວັນທີ 01.05.2020 ເລື່ອງການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ 19 ໃນໄລຍະແຕ່ວັນທີ 04-17 ພຶດສະພາ 2020<br>• ມະຕິຕົກລົງ ກອງປະຊຸມລັດຖະບານສະໄໝ | ກຳລັງແກ້ໄຂ |

| | | | | |
|---|---|---|---|---|
| | | ○ ຂໍ້ 4.5. ອະນຸຍາດໃຫ້ບັນດາຫ້າງ ຮ້ານຕ່າງໆ ເຊັ່ນ: ຮ້ານອາຫານ, ຮ້ານຂາຍຂອງກິນສຸກ, ຮ້ານຂາຍເຄື່ອງຍ່ອຍ, ຮ້ານຕັດຜົມ, ຮ້ານເສີມສວຍ, ຕະຫຼາດສົດ, ສູນການຄ້າ, ຮ້ານຄ້າຂາຍົກ, ຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານກາເຟ, ຮ້ານສ້ອມແປງລົດ, ຮ້ານລ້າງ-ອັດສີດ, ໂຮງງານນໍ້າດື່ມ ແລະ ໂຮງງານນໍ້າກ້ອນ ດໍາເນີນກິດຈະການໄດ້ ແຕ່ຕ້ອງປະຕິບັດໄລຍະຫ່າງ ແລະ ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ;<br>○ ຂໍ້ 4.6. ບັນດາໂຮງງານ, ໂຄງການລົງທຶນ ທີ່ເປັນກິດຈະການຂະໜາດໃຫຍ່ ຂອງພາກທຸລະກິດຕ່າງໆ ທີ່ສາມາດປະຕິບັດຖືກຕ້ອງຕາມເງື່ອນໄຂ ມາດຕະການຕາມຂໍ້ແນະນໍາເລກທີ 031/ສພກ ແມ່ນສາມາດເປີດດໍາເນີນກິດຈະການໄດ້. ມອບໃຫ້ທັງສອງຄະນະສະເພາະກິດ ຂັ້ນສູນກາງ ແຕ່ງຕັ້ງຄະນະວິຊາການ ລົງກວດກາ, ຢັ້ງຢືນ ແລະ ເຮັດບົດບັນທຶກສໍາລັບໂຄງການຂະໜາດໃຫຍ່ ທີ່ນໍາໃຊ້ແຮງງານຈໍານວນຫຼວງຫຼາຍ ທີ່ສູນກາງເປັນຜູ້ຄຸ້ມຄອງ, ສໍາລັບຫົວໜ່ວຍທຸລະກິດໃດ ທີ່ອົງການປົກຄອງທ້ອງຖິ່ນອະນຸຍາດ ແລະ ຄຸ້ມຄອງ ກໍ່ມອບໃຫ້ຄະນະສະເພາະກິດ ຂັ້ນ | ສາມັນປະຈໍາເດືອນເມສາ 2020, ເລກທີ 05/ລບ ລົງວັນທີ 24 ເມສາ 2020<br>• ແຈ້ງການສະບັບເລກທີ 481/ຫສນຍ ເລື່ອງ ການຕໍ່ເວລາ ແລະ ຄໍາແນະນໍາເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດຄໍາສັ່ງເລກທີ 06/ນຍ<br>• ບົດບັນທຶກກອງປະຊຸມຄະນະສະເພາະກິດແກ້ໄຂການລະບາດຂອງໂຄວິດ 19, ຄັ້ງວັນທີ 16 ເມສາ 2020<br>• ແຈ້ງການ ເລກທີ 0422/ອຄ.ກອຫ ລົງວັນທີ 22 ເມສາ 2020 ເຖິງພະແນກອຸດສາຫະ | |

| | | | | |
|---|---|---|---|---|
| | | ແຂວງ ແລະ ນະຄອນຫຼວງ ເປັນຜູ້ຮັບຜິດຊອບກວດກາ, ຢັ້ງຢືນ ແລະ ອະນຸຍາດ;<br>○ ຂໍ້ 5.2 ສືບຕໍ່ປະຕິບັດຢ່າງເຂັ້ມງວດ ໃນການປິດບັນດາກິດຈະການຮ້ານບັນເທີງ, ຮ້ານເຫຼົ້າ-ເບຍ, ຮ້ານກິນດື່ມ, ໂຮງຮູບເງົາ, ຮ້ານຄາຣາໂອເກະ, ຮ້ານບໍລິການນວດ-ສະປາທຸກປະເພດ, ກາຊີໂນ, ຕະຫຼາດກາງຄືນ, ສະຖານທີ່ອອກກຳລັງກາຍ-ຫຼິ້ນກິລາໃນຮົ່ມ, ກິລາກາງແຈ້ງ ເປັນທີມທີ່ມີການໃກ້ຊິດກັນ ເຊັ່ນ: ກິລາບານເຕະ, ບານບ້ວງ, ບານສົ່ງ, ມາລາທອນ, ຕີມວຍ, ຕີໄກ່, ເປຕັງ ແລະ ການແຂ່ງຂັນກິລາທຸກປະເພດ ທີ່ມີຜູ້ຊົມ ແລະ ນັກກິລາ ເຂົ້າຮ່ວມເກີນ 10 ຄົນ ແລະ ບໍ່ສາມາດຮັກສາໄລຍະຫ່າງເກີນ 1 ແມັດໄດ້<br><br>➢ ຜົນກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນ ເມສາ 2020 ວັນທີ 23 ເມສາ 2020, ມີເນື້ອໃນທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ຄື:<br>○ ຂໍ້ I.4. ໃຫ້ຄະນະສະເພາະກິດ ຄົ້ນຄວ້າ ແລະ ກຳນົດວ່າ ເຂດໃດເປັນເຂດທີ່ມີຄວາມສ່ຽງສູງ, ເຂດໃດເປັນເຂດທີ່ມີຄວາມສ່ຽງໜ້ອຍ ແລະ ເຂດໃດບໍ່ມີຄວາມສ່ຽງ (ເຂດແດງ, ເຂດເຫຼືອງ ແລະ ເຂດຂຽວ) ພ້ອມທັງກຳນົດແຈ້ງວ່າມາດຕະການປ້ອງກັນ, ຄວບ | ກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເລື່ອງການດຳເນີນກິດຈະການໂຮງງານໃນອຸດສາຫະກຳປຸງແຕ່ງ ໃນໄລຍະຕໍ່ເວລາການປະຕິບັດຄຳສັ່ງ, ສະບັບເລກທີ 06/ນຍ<br><br>• ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂບັນຫາຂອງການລະບາດຂອງ ໂຄວິດ 19 ອອກຄຳແນະນຳກ່ຽວກັບເງື່ອນໄຂ ແລະ ມາດຕະການ ສຳລັບພາກທຸລະກິດ ທີ່ສາມາດດຳເນີນກິດຈະການໃນໄລຍະທີ່ມີການລະບາດຂອງພະຍາດ ໂຄວິດ19 | |

| | | | | |
|---|---|---|---|---|
| | | ຄຸມ ແລະ ຜ່ອນກັນໃນການປະຕິບັດມາດຕະການຕໍ່ເຂດທີ່ມີຄວາມສ່ຽງໜ້ອຍ ແລະ ບໍ່ມີຄວາມສ່ຽງ, ຫຼັງຈາກນັ້ນຈຶ່ງອອກຄຳແນະນຳ ໃຫ້ບັນດາທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ.<br>○ ຂໍ້ II.2. ໃຫ້ຄະນະສະເພາະກິດ ຮັບຮ້ອນສົມທົບແຕ່ງຕັ້ງວິຊາການ ໄປກວດກາບັນດາກິດຈະການ, ໂຄງການ, ໂຮງຈັກໂຮງງານ ທີ່ໄດ້ສະເໜີວ່າ ມີຄວາມຈຳເປັນໃນການສືບຕໍ່ເຄື່ອນໄຫວ. ຖ້າກິດຈະການໃດສາມາດປະຕິບັດຕາມເງື່ອນໄຂ ແລະ ມາດຕະການທີ່ຕິດພັນ ທີ່ຄະນະສະເພາະກິດວາງອອກ ກໍ່ສາມາດອະນຸຍາດໃຫ້ດຳເນີນທຸລະກິດໄດ້... ສຳລັບບັນດາໂຮງຈັກໂຮງງານທີ່ຂຶ້ນກັບຄວາມຮັບຜິດຊອບຂອງແຂວງ ກໍ່ມອບໃຫ້ຄະນະສະເພາະກິດແຂວງລົງກວດກາ ອີງຕາມຄຳແນະນຳຂອງຄະນະສະເພາະກິດຂັ້ນສູນກາງ<br><br>➢ ອີງຕາມຂໍ້ທີ 7 ຂອງ ແຈ້ງການ ສະບັບເລກທີ 481/ຫສນຍ ເຊິ່ງເຫັນດີໃຫ້ມີການໂຍະຍານບາງມາດຕະການທີ່ຕິດພັນກັບການເຄື່ອນໄຫວຂອງພາກທຸລະກິດ, ບົນພື້ນຖານ ຮັບປະກັນວ່າບໍ່ມີຄວາມສ່ຽງຕິດເຊື້ອ-ໃຫ້ຄະນະສະເພາະກິດສ້າງເປັນນິຕິກຳແນະນຳລະອຽດ<br>➢ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກແຈ້ງການເລກທີ 0422/ອຄ.ກອຫ ລົງວັນທີ 22 ເມສາ 2020 | • ຈົດໝາຍ ຂອງ ລມຕ ການຄ້າ, ເລກທີ 0424/MoIC.DIH, ລົງວັນທີ 23 ເມສາ 2020 ຫາບັນດາບໍລິສັດແມ່, ຜູ້ສັ່ງຊື້ສິນຄ້າ ແລະ ຄູ່ຄ້າ ຢູ່ຕ່າງປະເທດ<br><br>• ແຈ້ງການ ເລກທີ 0412/ອຄ.ກຄພນ ລົງວັນທີ 21 ເມສາ 2020 ເລື່ອງ ສືບຕໍ່ຕິດຕາມກວດກາ ແລະ ຄຸ້ມຄອງລາຄາສິນຄ້າ ໃນ ແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ | |

| | | | | |
|---|---|---|---|---|
| | | ເຖິງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເລື່ອງການດຳເນີນກິດຈະການໂຮງງານໃນອຸດສາຫະກຳປຸງແຕ່ງ ໃນໄລຍະຕໍ່ເວລາການປະຕິບັດຄຳສັ່ງ, ສະບັບເລກທີ 06/ນຍ, ຄື:<br>○ ໃຫ້ສືບຕໍ່ປິດການດຳເນີນກິດຈະການຊົ່ວຄາວສຳລັບໂຮງງານທີ່ມີຄວາມສ່ຽງຕໍ່ການລະບາດ ໄປຈົນເຖິງ ທີ 03 ພຶດສະພາ 2020, ຍົກເວັ້ນໂຮງງານທີ່ຢູ່ໃນບັນຊີເປີດ ຕາມເອກະສານຊ້ອນທ້າຍທີ1 ຂອງແຈ້ງການ ທີ່ອະນຸຍາດໃຫ້ດຳເນີນກິດຈະການຕາມປົກກະຕິ ແຕ່ຕ້ອງປະຕິບັດຕາມຄຳແນະນຳກ່ຽວກັບເງື່ອນໄຂ ແລະ ມາດຕະການທີ່ຄະນະສະເພາະກິດຂັ້ນສູນກາງວາງອອກ.<br>○ ໂຮງງານທີ່ບໍ່ຢູ່ໃນບັນຊີເປີດ ຖ້າຢາກຂໍດຳເນີນກິດຈະການ ຖ້າຫາກສາມາດປະຕິບັດຕາມເງື່ອນໄຂ ແລະ ມາດຕະການທີ່ຄະນະສະເພາະກິດຂັ້ນສູນກາງວາງອອກຢ່າງຄົບຖ້ວນ ແມ່ນໃຫ້ສະເໜີຫາ ກະຊວງ ອຄ ເພື່ອສະເໜີຫາຄະນະກຳມະການກວດກາພິຈາລະນາເປັນແຕ່ລະກໍລະນີ<br><br>• ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂບັນຫາຂອງການລະບາດຂອງ ໂຄວິດ19 ອອກຄຳແນະນຳກ່ຽວກັບເງື່ອນໄຂ ແລະ ມາດຕະການ ສຳລັບພາກທຸລະກິດ ທີ່ສາມາດດຳເນີນກິດຈະການໃນໄລຍະທີ່ | | |

| | | | | |
|---|---|---|---|---|
| | | ມີການລະບາດຂອງພະຍາດ ໂຄວິດ19, ເຊິ່ງໄດ້ກຳນົດລະອຽດ ມາດຕະການ ແລະ ເງື່ອນໄຂຂອງຫົວໜ່ວຍທຸລະກິດທີ່ຕ້ອງການເປີດດຳເນີນກິດຈະການຄືນໃນໄລຍະນີ້<br><br>• ລັດຖະມົນຕີກະຊວງ ອຸດສາຫະກຳ ແລະ ການຄ້າ ສົ່ງຈົດໝາຍ (ເລກທີ 0424/MoIC.DIH, ລົງວັນທີ 23 ເມສາ 2020) ຫາບັນດາ ບໍລິສັດແມ່, ຜູ້ສັ່ງຊື້ສິນຄ້າ ແລະ ຄູ່ຄ້າ ຢູ່ຕ່າງປະເທດ (ສິນຄ້າທີ່ຜະລິດໂດຍໂຮງງານຕັດຫຍິບໃນ ສປປ ລາວ) ເພື່ອຂໍຄວາມເຫັນໃຈຈາກບັນດາຜູ້ຊື້ ໃຫ້ມີນະໂຍບາຍບໍ່ຍົກເລີກການສັ່ງຊື້ ຫຼື ການປັບໄໝ ຖ້າຫາກມີການສົ່ງສິນຄ້າຊັກຊ້າ<br><br>• ກະຊວງອຸດສາຫະກຳ ແລະ ການຄ້າ ອອກ ແຈ້ງການເລກທີ 0412/ອຄ.ກຄພນ ລົງວັນທີ 21 ເມສາ 2020 ເລື່ອງ ສືບຕໍ່ຕິດຕາມກວດກາ ແລະ ຄຸ້ມຄອງລາຄາສິນຄ້າ ໃນ ແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ, ຂໍ້ 1.2 ລະບຸໃຫ້ ອະນຸຍາດສືບຕໍ່ດຳເນີນກິດຈະການທີ່ມີຄວາມຈຳເປັນ ເປັນຕົ້ນແມ່ນ ຮ້ານຂາຍຍົກ ແລະ ຮ້ານຂາຍຍ່ອຍ ທີ່ຂາຍສິນຄ້າປະເພດສະບຽງອາຫານ, ເຄື່ອງອຸປະໂພກ ບໍລິໂພກທີ່ຮັບໃຊ້ຊີວິດການເປັນຢູ່ປະຈຳວັນ, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ. | | |

| | | | | |
|---|---|---|---|---|
| ຕິດພັນກັບກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ | 2. ສະເໜີໃຫ້ລັດຖະບານພິຈາລະນາແກ້ໄຂສະພາບການ ກີດຂວາງລົດບັນທຸກສິນຄ້າທີ່ບໍ່ໃຫ້ຜ່ານດ່ານຂອງເມືອງ ແລະ ແຂວງຢ່າງຮີບດ່ວນ<br><br>3. ຂໍສະເໜີໃຫ້ລັດຖະບານ ໂດຍສະເພາະກະຊວງໂຍທາທິການ ແລະ ຂົນສົ່ງແກ້ໄຂແຈ້ງການ ເລກທີ 266 ທີ່ຫ້າມ ຄົນຈີນຂັບລົດເຂົ້າມາເກັບສິນຄ້າກະສິກໍາທີ່ຢູ່ໃນໄລຍະເວລາເກັບກ່ຽວຜົນລະປູກເພື່ອສົ່ງອອກ ສປ ຈີນ ເຊັ່ນ:ໝາກຖົ່ວ,ໝາກໂມ, ອ້ອຍ, ແລະ ອື່ນໆ, ໂດຍໃຫ້ແກ່ຍາວເວລາການປະຕິບັດແຈ້ງການດັ່ງກ່າວ ໄປອີກ 2 ເດືອນ ເພື່ອໃຫ້ຄົນຂັບລົດຈີນທີ່ມີເງື່ອນໄຂສາມາດຂັບລົດເຂົ້າມາກັບສິນຄ້າຈາກຝ່າຍລາວໄດ້, ເຊິ່ງຜູ້ປະກອບການຝ່າຍລາວມີຄວາມຫຍຸ້ງຍາກສົມຄວນແລະໃຊ້ເວລາຂ້ອນຂ້າງດົນໃນການຂໍເຊົ່າລົດຂົນສົ່ງນໍາຝ່າຍຈີນແລະການ ປະກອບເອກະສານກ່ຽວຂ້ອງຕ່າງໆ | ➢ ກະຊວງ ຍທຂ ອອກແຈ້ງການ ເລກທີ 00283/ຍທຂ ລົງວັນທີ 24 ເມສາ 2020 ເລື່ອງ ການຂົນສົ່ງສິນຄ້າພາຍໃນ, ເຂົ້າອອກ ລະຫວ່າງປະເທດ ແລະ ຜ່ານແດນ ຢູ່ ສປປ ລາວ ໃນໄລຍະ ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ 19, ມີເນື້ອໃນທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ຄື:<br><br>○ ສໍາລັບການຂົນສົ່ງສິນຄ້າພາຍໃນປະເທດ: ຄົນຂັບລົດ ແລະ ຜູ້ຕິດຕາມ ທີ່ເຄື່ອນຍ້າຍຢູ່ພາຍໃນປະເທດຜ່ານບັນດາເມືອງ, ແຂວງ, ນະຄອນຫຼວງແມ່ນສາມາດຂົນສົ່ງສິນຄ້າ ແລະ ອາຫານ ໄປເຖິງປາຍທາງ ຫຼື ລູກຄ້າໄດ້ຢ່າງປົກກະຕິ ໂດຍໃຫ້ໃສ່ຜ້າປິດປາກ ຕະຫຼອດເວລາການປະຕິບັດວຽກ, ແລະ ໄດ້ຮັບການວັດແທກອຸນຫະພູມຈາກເຈົ້າໜ້າທີ່ສາທາລະນະສຸກຕາມເສັ້ນທາງຢ່າງເຂັ້ມງວດ. ຖ້າບໍ່ມີອາການສົງໄສ ໃຫ້ເຈົ້າໜ້າທີ່ອໍານວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າ.<br><br>○ ການຂົນສົ່ງສິນຄ້າຂາອອກ: ຂໍ້ 3.2. ລະບຸວ່າ ໃນໄລຍະການແຜ່ລະບາດຂອງ ໂຄວິດ19 ນີ້ ເຫັນດີ | • ກະຊວງ ຍທຂ ອອກແຈ້ງການ ເລກທີ 00283/ຍທຂ ລົງວັນທີ 24 ເມສາ 2020 ເລື່ອງ ການຂົນສົ່ງສິນຄ້າພາຍໃນ, ເຂົ້າອອກ ລະຫວ່າງປະເທດ ແລະ ຜ່ານແດນ ຢູ່ ສປປ ລາວ ໃນໄລຍະ ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ 19,<br><br>• ແຈ້ງການ ເລກທີ 266/ຍທຂ.ກຂສ<br><br>• ແຈ້ງການຂອງກະຊວງໂຍທາທິການ ແລະ | ກໍາລັງແກ້ໄຂ |

| | | | | |
|---|---|---|---|---|
| | | ອະນຸຍາດໃຫ້ລົດຂົນສົ່ງສິນຄ້າ ແລະ ຕູ້ຄອນເທນເນີ້ ເປົ່າຂອງຕ່າງປະເທດສາມາດເຂົ້າມາຮັບເອົາສິນຄ້າຢູ່ ສປປ ລາວ ເພື່ອສົ່ງອອກໄດ້, ຈົນກວ່າຈະມີຄຳສັ່ງ ປ່ຽນແປງຈາກລັດຖະບານ<br>○ ຂໍ້ 5.2: ໃນໄລຍະການແຜ່ລະບາດຂອງໂຄວິດ 19 ທີ່ລົດຂົນສົ່ງພາຍໃນບໍ່ພຽງພໍ, ເຫັນດີອະນຸຍາດໃຫ້ ບໍລິສັດຂົນສົ່ງຂອງລາວ ສາມາດນຳເຂົ້າ ຫຼື ເຊົ່າລົດ ບັນທຸກ, ຫາງລາກ ແລະ ຕູ້ຄອນເທນເນີ້ຂອງ ຕ່າງປະເທດເຂົ້າມານຳໃຊ້ກ່ອນ ໂດຍແມ່ນຜູ້ ປະກອບການສະເໜີເຮັດໜັງສືຄ້ຳປະກັນກັບເຈົ້າໜ້າ ທີ່ດ່ານພາສີເປັນຜູ້ພິຈາລະນາ ແຕ່ຕ້ອງດຳເນີນ ເອກະສານຕາມຂັ້ນຕອນນຳເຂົ້າຢ່າງຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການຂອງ ສປປ ລາວຕາມ ພາຍຫຼັງ | ຂົນສົ່ງ ເລກທີ 07852/ຍທຂ.ກສຂ ລົງວັນທີ 16 ເມສາ 2020 ເຖິງບັນດາຫົວ ໜ້າພະແນກ ຍທຂ ນະຄອນຫຼວງວຽງຈັນ ແລະ ແຂວງ, ເລື່ອງ ວິທີການແກ້ໄຂການ ຂົນສົ່ງສິນຄ້າຢູ່ ນະຄອນຫຼວງວຽງຈັນ ແລະ ແຂວງ. | |
| ຕິດພັນກັບກະຊວງ ແຮງງານ ແລະ ສະ ຫວັດດີການສັງຄົມ | 4. ສະເໜີໃຫ້ພິຈາລະນາວາງ ອອກນະໂຍບາຍຊ່ວຍເຫຼືອສະ ໜັບສະໜູນ ເງິນອຸດໜູນໃຫ້ແກ່ແຮງງານທີ່ບໍ່ຢູ່ໃນລະບົບ ປະກັນສັງຄົມ ກໍ່ສາມາດໄດ້ຮັບເງິນສະໜັບສະໜູນຈາກ ລັດຖະ ບານ ໃຫ້ໃກ້ຄຽງກັບແຮງງານທີ່ຢູ່ໃນລະບົບ ປະກັນສັງຄົມ ໂດຍອີງຕາມສັນຍາການວ່າຈ້າງງານ | ○ ຜົນກອງປະຊຸມລັດຖະບານ ສະໄໝສາມັນປະຈຳ ເດືອນເມສາ 2020 ວັນທີ 23 ເມສາ 2020, ທີ່ຕິດພັນ ກັບຂໍ້ສະເໜີຂອງ ສຄອຊ ມີຄື: ຂໍ້ II.4 ເຫັນດີໃຫ້ ປະຕິບັດເງິນອຸດໜູນຕໍ່ແຮງງານ ສຳລັບແຮງງານທີ່ເປັນ ສະມາຊິກກອງທຶນປະກັນສັງຄົມ ຕາມກົດໝາຍປະກັນ | • ມະຕິຕົກລົງ ກອງ ປະຊຸມລັດຖະບານສະໄໝ ສາມັນປະຈຳເດືອນເມສາ 2020, ເລກທີ 05/ລບ ລົງວັນທີ 24 ເມສາ 2020 | ກຳລັງແກ້ໄຂ |

| | | | | |
|---|---|---|---|---|
| | ລະຫວ່າງ ນາຍຈ້າງ ແລະ ຜູ່ອອກແຮງງານ ຫຼື ເອກະສານການຮັບເງິນເປັນການຢັ້ງຢືນ. ພ້ອມດຽວກັນນັ້ນ, ຂໍສະ ເໜີໃຫ້ອອກແຈ້ງການ ໂດຍໄວກ່ຽວກັບຈໍານວນເງິນອຸດໜູນທີ່ຈະໄດ້ຮັບ ຂອງແຮງງານທີ່ຢູ່ໃນລະບົບປະ ກັນສັງຄົມ ໃນໄລຍະການແຜ່ລະບາດເຊື້ອພະຍາດດັ່ງກ່າວ. | ສັງຄົມກໍານົດ. ພ້ອມທັງໃຫ້ຄົ້ນຄວ້າມາດຕະການຮອງຮັບໄວ້ແຕ່ຫົວທີ ກໍລະນີ ຜົນກະທົບຫາກແກ່ຍາວເວລາໄປ. ພ້ອມກັນນັ້ນ ກໍໃຫ້ຖືໂອກາດນີ້, ໂຄສະນາດຶງດູດ ແລະ ຂະຫຍາຍສະມາຊິກປະກັນສັງຄົມໃຫ້ເພີ່ມຂຶ້ນໃນຕໍ່ໜ້າ. ສໍາລັບແຮງງານທີ່ຢູ່ນອກລະບົບ, ໃຫ້ຄົ້ນຄວ້າການປະຕິບັດນະໂຍບາຍໃນຮູບແບບຊ່ວຍເຫຼືອດ້ານສັງຄົມສົງເຄາະ ຕາມດໍາລັດວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 169/ລບ, ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບໃຫ້ອໍານາດການປົກ ຄອງແຕ່ລະຂັ້ນສັງລວມຈໍານວນຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອຕາມເງື່ອນໄຂຕົວຈິງ ໃຫ້ຊັດເຈນກ່ອນ ພ້ອມທັງຄິດໄລ່ອັດຕານະໂຍບາຍທີ່ເໝາະສົມ ແລະຄວາມຕ້ອງການທາງດ້ານງົບປະມານທັງໝົດຢ່າງຊັດເຈນ, ຈາກນັ້ນ ຈຶ່ງສະເໜີລັດຖະບານ ພິຈາລະນາຕົກລົງ. | | |
| ຕິດພັນກັບ ທະນາຄານ ແຫ່ງ ສປປ ລາວ | 5. ໃນໄລຍະການລະບາດຂອງເຊື້ອພະຍາດດັ່ງກ່າວ, ສະເໜີໃຫ້ລັດຖະບານພິຈາລະນາອອກຄໍາສັ່ງເຖິງ ທະນາຄານໃຫ້ເລື່ອນການຊໍາລະໜີ້ທີ່ເປັນຕົ້ນທຶນ ແລະ/ຫຼື ດອກເບ້ຍຂອງລູກຄ້າ ທີ່ເປັນຜູ້ປະກອບການ ຫຼື ເປັນຜູ້ອອກແຮງງານ ໃນໄລຍະ 3 ເດືອນຫຼື 6 ເດືອນ ຕາມຄວາມເໝາະສົມ ເປັນເອກະພາບທົ່ວລະບົບ, ພ້ອມດຽວ | | | |

| | | | | |
|---|---|---|---|---|
| | ກັນນັ້ນ ສະເໜີໃຫ້ພິຈາລະນາ ໃຫ້ບັນດາສະຖາບັນການເງິນຈຸລະພາກ (ສກຈ) ປະຕິບັດ ຂໍ້ຕົກລົງຂອງ ທຫລ ສະ ບັບເລກທີ 238/ທຫລ ຕາມຄວາມເໝາະສົມກັບສະພາບການຂອງ ສະຖາບັນ.<br><br>6. ສະເໜີລັດຖະບານພິຈາລະນາອອກແຈ້ງການ ຫຼື ຂໍ້ຕົກລົງໃຫ້ ສະຖາບັນການເງິນຈຸລະພາກ (ສກຈ) ປ່ອຍເງິນກູ້ສຸກເສີນ ທີ່ມີ ດອກເບ້ຍພິເສດຕ່ຳສຸດ ໃນວົງເງິນທີ່ເໝາະສົມ ແລະ ມີໄລຍະເວລາການກູ້ເງິນ 6 ເດືອນ ຫາ 12 ເດືອນ, ພ້ອມດຽວກັນນັ້ນ ສະເໜີພິຈາລະນາໃຫ້ເລື່ອນການຊຳລະອາກອນກຳໄລລ່ວງໜ້າ ຂອງ ສະຖາບັນການເງິນຈຸລະພາກ ສຳລັບໄຕມາດທີ 1 ແລະ ໄຕມາດທີ 2 (ສຳລັບອົງກອນທີ່ມີກຳໄລ) ໄປທ້າຍປີເພື່ອສ້າງເງື່ອນໄຂໃຫ້ ສະຖາບັນການເງິນຈຸລະພາກ ສາມາດປ່ອຍກູ້ເງິນດັ່ງກ່າວໃຫ້ແກ່ຜູ້ປະກອບການໄດ້ໂດຍໄວ. | | | |
| ຕິດພັນກັບກະຊວງການເງິນ | 7. ເພື່ອເປັນການສະໜັບສະໜູນຊ່ວຍເຫຼືອໃນການຫຼຸດຜ່ອນຄ່າໃຊ້ຈ່າຍໃຫ້ແກ່ຜູ້ປະ ກອບການ ແລະ ແຮງງານ ສະເໜີພິຈາລະນາອອກແຈ້ງການຍົກເວັ້ນອາກອນຄ່າເຊົ່າທີ່ດິນ,ຕຶກອາຄານ, ທີ່ພັກພາອາໃສ ແລະອື່ນໆ ແລະແຈ້ງ | | | |

| | | | | |
|---|---|---|---|---|
| | ເຖິງເຈົ້າຂອງກິດຈະການດັ່ງກ່າວໃຫ້ຍົກເວັ້ນຫຼືຫຼຸດຜ່ອນ ຄ່າເຊົ່າຕາມ ຄວາມເໝາະສົມ<br>8. ສະເໜີ ລຖບ ພິຈາລະນາ ອອກນະໂຍບາຍຜ່ອນຜັນ ເພື່ອ ກຳນົດ ອັດຕາ ພາສີ~ອາກອນ ລວມທັງ ຄ່າເຊົ່າທີ່ດິນ ແລະ ສະຖານທີ່ປະກອບການ ເຮັດໃຫ້ຕົ້ນທຶນທຸລະກິດຕ່ຳລົງ ໃນຊ່ວງໄລຍະ 6ເດືອນ ທັງນີ້ເພື່ອເຮັດໃຫ້ຜູ້ປະກອບການໂດຍສະເພາະ SME ແລະແຮງງານທີ່ມີລາຍຮັບຕ່ຳເຂົ້າເຖິງໄດ້ງ່າຍຂຶ້ນ. | | | |
| ຕິດພັນກັບຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ | 8. ສະເໜີ ລຖບ ອອກແຈ້ງການ ແລະ ເອກະສານແນະນຳຕ່າງໆ ທີ່ກ່ຽວພັນເຖິງການເຄື່ອນໄຫວທຸລະກິດ ໃຫ້ມີຄວາມຊັດເຈນ ແລະ ເອກະພາບ ລະຫ່ວາງ ສູນກາງແລະທ້ອງຖິ່ນ ລວມເຖິງ ຂະແໜງການຕ່າງໆ ທີ່ຕິດພັນກັບພາກທຸລະກິດ ເພື່ອປ້ອງກັນ ແລະ ຫຼີກລ້ຽງ ບໍ່ໃຫ້ເປັນຊ່ອງວ່າງ ຂອງກົນໄກຈັດຕັ້ງປະຕິບັດ. | | | |

3. ບົດສະເໜີ ຂອງ ສຄອຊ ເລກທີ 0355/ສຄອຊ, ວັນທີ 29 ເມສາ 2020 ເລື່ອງ ສະເໜີພິຈາລະນາປັບປຸງບາງມາດຕະການຂອງລັດຖະບານ ແລະ ຄະນະສະເພາະກິດ

| ຂະແໜງການ ກ່ຽວຂ້ອງ | ຂໍ້ສະເໜີ | ຄວາມຄືບໜ້າ | ເອກະສານອ້າງອີງ | ໝາຍເຫດ |
|---|---|---|---|---|
| | 1. ສະເໜີໃຫ້ ພິຈາລະນາຄືນ ການຫຼຸດຜ່ອນ ເງື່ອນໄຂໃນຄຳແນະນຳສະບັບເລກທີ 031/ສພກ ໃນຂໍ້ I.3 ສຳລັບພາກທຸລະກິດທີ່ຈະເປີດດຳເນີນກິດຈະການຕ້ອງມີຫໍພັກຂອງພະນັກງານ ກຳມະກອນ ທີ່ບໍ່ແອອັດ ແລະ ຮັບປະກັນໄລຍະຫ່າງ 1 ແມັດ. ໃນສະພາບຕົວຈິງ ຫຼາຍຫົວໜ່ວຍທຸລະກິດບໍ່ມີຫໍພັກສະເພາະສຳລັບພະນັກງານ ແລະ ກຳມະກອນ. ພະນັກງານດັ່ງກ່າວ ແມ່ນມີທີ່ພັກອາໄສ ແລະ ສາມາດຄຸ້ມຄອງໂດຍອຳນາດການປົກຄອງທ້ອງຖິ່ນຂັ້ນບ້ານ ແລະ ຂັ້ນເມືອງໄດ້ຢ່າງເຂັ້ມງວດ ຈຶ່ງສະເໜີໃຫ້ພິຈາລະນາຜ່ອນຜັນໃຫ້ສາມາດດຳເນີນທຸລະກິດຂອງໂຮງງານ ແລະ ທຸລະກິດດັ່ງກ່າວ,<br><br>2. ສະເໜີພິຈາລະນາຜ່ອນຜັນ ໂດຍອະນຸມັດໃຫ້ ໂຮງງານ ແລະ ທຸລະກິດສາມາດດຳເນີນກິດຈະການໄດ້ ໂດຍໃຫ້ຢັ້ງຢືນຕົນເອງວ່າ ຈະປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ ເພື່ອປ້ອງກັນການລະບາດຂອງພະຍາດໂຄວິດ ຕາມ | ➢ ອີງຕາມແຈ້ງການຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ເລກທີ 524/ຫສນຍ ລົງວັນທີ 01.05.2020 ເລື່ອງ ການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ 19 ໃນໄລຍະແຕ່ວັນທີ 04-17 ພຶດສະພາ 2020, ໃນ ຂໍ້ 4. 4.ລະບຸ ເຫັນດີໃຫ້ປະຕິບັດມາດຕະການຜ່ອນຜັນຈຳນວນໜຶ່ງ (ຂໍ້ 6.5: ມາດຕະການຜ່ອນຜັນນີ້ ແມ່ນມາດຕະການຊົ່ວຄາວ ເຊິ່ງຈະເລີ່ມມີຜົນສັກສິດ ນັບແຕ່ວັນທີ 04 ຫາວັນທີ 17 ພຶດສະພາ 2020, ແລ້ວຈະມີການທົບທວນຄືນ, ກໍລະນີມີການປ່ຽນແປງ ລັດຖະບານຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ), ໃນມາດຕະການຜ່ອນຜັນມີເນື້ອໃນທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ຄື:<br>○ ຂໍ້ 4.1 ອະນຸຍາດໃຫ້ສຳນັກງານ ອົງການຂອງພັກ-ລັດ, ສຳນັກງານຂອງບໍລິສັດ ເປີດດຳເນີນການ ໂດຍ ໃຫ້ | • ແຈ້ງການຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ເລກທີ 524/ຫສນຍ ລົງວັນທີ 01.05.2020 | |

| | | | | |
|---|---|---|---|---|
| | ບົດຮຽນຂອງປະເທດອື່ນ. ຖ້າໂຮງງານ ແລະ ທຸລະກິດໃດທີ່ມີຄວາມສ່ຽງ, ພາກລັດທີ່ກ່ຽວຂ້ອງຈິ່ງລົງກວດກາ, ຕັກເຕືອນ, ປັບໄໝ ແລະ ໃຫ້ຢຸດຕິການດຳເນີນການ<br><br>3. ສະເໜີໃຫ້ພິຈາລະນາກຳນົດເຂດຄວາມສ່ຽງການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ຕາມມະຕິຕົກລົງສະບັບເລກທີ 05/ລບ ຢ່າງຮີບດ່ວນ ແລະ ມີມາດຕະການຈັດຕັ້ງປະຕິບັດຢ່າງສົມເຫດສົມຜົນ ເພື່ອໃຫ້ບັນດາຫົວໜ່ວຍທຸລະກິດທີ່ມີເງື່ອນໄຂໃນການປ້ອງກັນການແຜ່ລະບາດຂອງເຊື້ອພະຍາດດັ່ງກ່າວໃຫ້ສາມາດດຳເນີນທຸລະກິດໄດ້ໃນເຂດດັ່ງກ່າວ<br><br>4. ສະເໜີພິຈາລະນາຜ່ອນຜັນການອະນຸມັດໃຫ້ເຈົ້າຂອງທຸລະກິດແລະຊ່ຽວຊານທີ່ເປັນຊາວຕ່າງປະເທດທີ່ມີຄວາມຈຳເປັນ ເຂົ້າມາເຮັດວຽກໃນ ສປປ ລາວ | ພະນັກງານລັດຖະກອນໝູນວຽນມາເຮັດວຽກເປັນປົກກະຕິ ແຕ່ຕ້ອງໃຫ້ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ,<br>○ ຂໍ້ 4.5. ອະນຸຍາດໃຫ້ບັນດາຫ້າງ ຮ້ານຕ່າງໆ ເຊັ່ນ: ຮ້ານອາຫານ, ຮ້ານຂາຍຂອງກິນສຸກ, ຮ້ານຂາຍເຄື່ອງຍ່ອຍ, ຮ້ານຕັດຜົມ, ຮ້ານເສີມສວຍ, ຕະຫຼາດສົດ, ສູນການຄ້າ, ຮ້ານຄ້າຂາຍົກ, ຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານກາເຟ, ຮ້ານສ້ອມແປງລົດ, ຮ້ານລ້າງ-ອັດສີດ, ໂຮງງານນ້ຳດື່ມ ແລະ ໂຮງງານນ້ຳກ້ອນ ດຳເນີນກິດຈະການໄດ້ ແຕ່ຕ້ອງປະຕິບັດໄລຍະຫ່າງ ແລະ ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ;<br>○ ຂໍ້ 4.6. ບັນດາໂຮງງານ, ໂຄງການລົງທຶນ ທີ່ເປັນກິດຈະການຂະໜາດໃຫຍ່ ຂອງພາກທຸລະກິດຕ່າງໆ ທີ່ສາມາດປະຕິບັດຖືກຕ້ອງຕາມເງື່ອນໄຂ ມາດຕະການຕາມຂໍ້ແນະນຳເລກທີ 031/ສພກ ແມ່ນສາມາດເປີດດຳເນີນກິດຈະການໄດ້. ມອບໃຫ້ທັງສອງຄະນະສະເພາະກິດ ຂັ້ນສູນກາງ ແຕ່ງຕັ້ງຄະນະວິຊາການ ລົງກວດກາ, ຢັ້ງຢືນ ແລະ ເຮັດບົດບັນທຶກສຳລັບໂຄງການຂະໜາດໃຫຍ່ ທີ່ນຳໃຊ້ແຮງງານຈຳນວນຫຼວງຫຼາຍ ທີ່ສູນກາງ | | |

| | | | | |
|---|---|---|---|---|
| | | ເປັນຜູ້ຄຸ້ມຄອງ, ສຳລັບຫົວໜ່ວຍທຸລະກິດໃດ ທີ່ອົງການປົກຄອງທ້ອງຖິ່ນອະນຸຍາດ ແລະ ຄຸ້ມຄອງ ກໍ່ມອບໃຫ້ຄະນະສະເພາະກິດ ຂັ້ນແຂວງ ແລະ ນະຄອນຫຼວງ ເປັນຜູ້ຮັບຜິດຊອບກວດກາ, ຢັ້ງຢືນ ແລະ ອະນຸຍາດ;<br>○ ຂໍ້ 5.2 ສືບຕໍ່ປະຕິບັດຢ່າງເຂັ້ມງວດ ໃນການປິດບັນດາກິດຈະການຮ້ານບັນເທີງ, ຮ້ານເຫຼົ້າ-ເບຍ, ຮ້ານກິນດື່ມ, ໂຮງຮູບເງົາ, ຮ້ານຄາຣາໂອເກະ, ຮ້ານບໍລິການນວດ-ສະປາທຸກປະເພດ, ກາຊີໂນ, ຕະຫຼາດກາງຄືນ, ສະຖານທີ່ອອກກຳລັງກາຍ-ຫຼິ້ນກິລາໃນຮົ່ມ, ກິລາກາງແຈ້ງ ເປັນທີມທີ່ມີການໃກ້ຊິດກັນ ເຊັ່ນ: ກິລາບານເຕະ, ບານບ້ວງ, ບານສົ່ງ, ມາລາທອນ, ຕີມວຍ, ຕີໄກ່, ເປຕັງ ແລະ ການແຂ່ງຂັນກິລາທຸກປະເພດ ທີ່ມີຜູ້ຊົມ ແລະ ນັກກິລາ ເຂົ້າຮ່ວມເກີນ 10 ຄົນ ແລະ ບໍ່ສາມາດຮັກສາໄລຍະຫ່າງເກີນ 1 ແມັດໄດ້<br>○ ຂໍ້ 5.5: ໂຈະການອອກວິຊາທຸກປະເພດ ໃຫ້ບຸກຄົນທົ່ວໄປທີ່ເດີນທາງມາຈາກປະເທດທີ່ຍັງມີການລະບາດຂອງພະຍາດ COVID-19, ຍົກເວັ້ນວິຊາສຳລັບຊ່ຽວຊານ, ວິຊາການ ແລະ ແຮງງານຕ່າງປະເທດ ທີ່ມີຄວາມ | | |

| | | | | |
|---|---|---|---|---|
| | | ຈຳເປັນເຂົ້າມາປະຕິບັດວຽກງານ ຢູ່ບັນດາໂຄງການທີ່ສຳຄັນ ແລະ ຈຳເປັນ, ແຕ່ຕ້ອງປະຕິບັດການກວດຫາເຊື້ອ COVID-19 ແລະ ຈຳກັດບໍລິເວນຕົວເອງ 14 ວັນ ຢູ່ຕາມສູນທີ່ທາງການກຳນົດ ຕາມທີ່ລະບຸໄວ້ໃນແຈ້ງການ ສະບັບເລກທີ 507/ຫສນຍ, ລົງວັນທີ 24 ເມສາ 2020. ມອບໃຫ້ຄະນະສະເພາະກິດ ອອກຄຳແນະນຳໃນການຈັດຕັ້ງປະຕິບັດຕົວຈິງ ໃຫ້ລະອຽດ ແລະ ຮັດກຸມ. | | |
| | | | | |